SmokeFreeColorado
Good health is good business

ກົດໝາຍຣັດໂຄໂລຣາໂດປີ 2006 ວ່າດ້ວຍອາກາດປອດໂປ່ງໃນອາຄານ

ບັງຄັບໃຊ້ແຕ່: ວັນທີ 2 ກໍຣກົດ 2006 ເປັນຕົ້ນໄປ

ປະກາດເຈ້ງຖືງຈຸດປະສົງຂອງກົດໝາຍທີ່ຈະຕ້ອງຮັກສາແລະປັບປຸ່ງ ສຸຂະພາບ, ຄວາມສນຸ ສະບາຍແລະສິ່ງແວດລ້ອມ ຂອງຊາວຣັດໂຄໂລຣາໂດ ໃຫ້ຫລົດຜ່ອນຈາກກິນຄວັນຂອງຢາສູບ.

ຕ້ອງໃຫ້ມີເຂດປອດກິ່ນຄວັນຂອງຢາສູບໃນອາຄານ

ຮວມທັງແຕ່ບໍ່ຈຳກັດ:

- ສະຖານທີ່ແລະອາຄານສາທາຣະນະເປັນຕົ້ນແມ່ນ: ລິຟ, ຫ້ອງນ້ຳ, ໂຮງໜັງ/ໂຮງລະຄອນ, ຫໍພິພິທພັນ, ຫໍສມຸດ, ໂຮງຮຽນ, ສະຖານສຶກສາ, ອາຄານຄົນຊາລາ ແລະ ສະຖານພຍາບານຄົນສູງອາຍຸ
- ຫ້ອງໂຖງ, ເຂດຮັບຕ້ອນ, ທາງຍ່າງໃນອາຄານ ແລະ ເຂດທີ່ຜູ້ຄົນໃຊ້ໂດຍທົ່ວໄປ
- ຮ້ານອາຫານ, ຮ້ານກິນດື່ມ, ສະຖານທີ່ຫລິ້ນການພະນັນ, ສະຖານທີ່ຫລິ້ນບິລຽດ -ສະນຸກເກ, ສະຖານທີ່ຫລິ້ນ ໂບວລິ່ງ, ຮ້ານຂາຍອາຫານສິດ, ສະຖານທີ່ບໍຣິການອາຫານທຸກສະຖານທີ
- ສະຖານທີ່ຫລິ້ນກິລາໃນຮົ່ມ, ໂຮງພາລະສຶກສາ ແລະ ຫ້ອງປະຊຸມ
- ສະຖານທີ່ປິ່ນປົວສຸຂະພາບ, ໂຮງພະຍາບານ, ຄລີນິກ, ຫ້ອງເຮັດການຂອງທ່ານໝໍ ແລະ ສະຖານທີ່ລ້ຽງເດັກ
- ບໍ່ໃຫ້ຫລົດ 75% ຂອງເນື້ອທີ່ຫ້ອງເຊ່ົາໃນໂຮງແຮມ ແລະ ໂມແທລ
- ຫ້ອງລໍຖ້າ ແລະ ຫ້ອງປະຊຸມຂອງບັນດາລຸກຂຸນ, ຫ້ອງສານ ແລະ ຫ້ອງປະຊຸມສາທາຣະນະ
- ພາຫະນະໂດຍສານຂອງຣັດທຸກສນິດ ແລະຮູບແບບ

ບໍຣິເວນທາງເຂ້ົາ

- ບໍຣິເວນທາງເຂ້ົາຂອງທຸກຕົວອາຄານທີ່ຄວບຄຸມໂດຍກົດໝາຍນ້ີ ຈະຕ້ອງໃຫ້ປອດຈາກກິ່ນຄວັນຂອງຢາສູບ
- "ບໍຣິເວນທາງເຂ້ົາ" ໝາຍເຖິງບໍຣິເວນອ້ອງນອກຕ່ໍໜ້າທາງເຂ້ົາຂອງທຸກຕົວອາຄານ. ບໍຣິເວນທາງເຂ້ົານ້ີ ກວມລວມທັງເຂດກ່ຳນົດພິເສດທີ່ຢູ່ອ້ອງນອກຕ່ໍໜ້າທາງເຂ້ົາຊຸ້ບສິນທີ່ເປັນສາທາຣະນະ ແລະ ເອກກະຊົນອີກດ້ວຍ. ອຳນາດການປົກຄອງທ້ອງຖິ່ນ ຈະເປັນຜູ້ກຳນົດເຂດກຳນົດພິເສດເອົາເອງ ຫລື ຖ້າອຳນາດການປົກຄອງທ້ອງຖິ່ນ ບໍ່ປະຕິບັດ ເຂດກຳນົດພິເສດກໍ່ຄວນຈະເປັນບໍຣິເວນ 15 ຟິດ ຈາກທາງເຂ້ົາຂອງຕົວອາຄານ.
- ອຳນາດການປົກຄອງທ້ອງຖິ່ນ ອາດກຳນົດບໍຣິເວນເຂດກຳນົດພິເສດນ້ອຍກວ່າ 15 ຟິດ ກໍ່ເປັນໄດ້

ການຍົກເວັ້ນ

- ບ້ານເຮືອນ, ທີ່ພັກ, ພາຫະນະທີ່ເປັນຂອງສ່ວນຕົວ ເວັ້ນເສັຽແຕ່ໃຊ້ເປັນບ່ອນແລະພາຫະນະ ຮັບຝາກ ແລະລ້ຽງເດັກ
- ຣິດ ລີມູຊິນ ທີ່ຮັບຈ້າງອົນສິ່ງສ່ວນຕົວ
- 25% ຂອງຫ້ອງເຊົ່າໃນໂຮງແຮມແລະໂມແທລ
- ຮ້ານຂາຍຢາສູບຍ່ອຍ
- ສະຖານທີ່ທີ່ຖືກຕ້ອງກັບນິຍາມຂອງຮ້ານສູບຢາ "cigar-tobacco bar" ຊຶ່ງກຳນົດໄວ້ໃນມື້ວັນທີ 31 ທັນວາ, 2005.
- ບໍຣິເວນນອກເຂດກຳນົດພິເສດໃກ້ທາງເຂົ້າຂອງທຸກຕົວອາຄານທີ່ທຳທຸຣະກິດ
- ເຂດພື້ນທີ່ຍ່ອຍ ໃນສະຖານທີ່ຫລີ້ການພະນັນ
- ຫ້ອງສູບຢາທີ່ປິດສນິດ ແຕ່ລະບາຍດ້ວຍພັດລົມດູດທີ່ນອກຢ່າງ ໃນສນາມບິນ Denver International
- ນາຍຈ້າງທີ່ມີພະນັກງານສາມຄົນ ຫລື ນ້ອຍກວ່ານັ້ນ ຊຶ່ງບໍ່ສາມາດໃຊ້ສະຖານທີ່ສາທາຣະນະໄດ້
- ອາຄານສ່ວນຕົວໃນ farm ຫລື ranch ທີ່ມີຣາຍໄດ້ທັ້ງຫມົດຕ່ຳກວ່າ 500.000 ດອນລາ

ການລົງໂທດ

ການລະເມີດຕໍ່ກົດຫມາຍນີ້ ເປັນການກະທຳຄວາມຜິດສະຖານເບົາຣະດັບ 2 (Class 2 Petty Offense)

- ມັນເປັນການຣະເມີດກົດຫມາຍທີ່ບຸກຄົນຄົນນຶ່ງ ຊຶ່ງເປັນເຈົ້າຂອງ, ດູແລ, ນຳໃຊ້ ຫລືເວົ້າອີກຢ່າງນຶ່ງ ຄວບຄຸມການໃຊ້ສອຍສະຖານທີ່ ທີ່ຢູ່ພາຍໃຕ້ກົດຫມາຍ ຈະລະເມີດຕໍ່ຂໍ້ກຳນົດຂອງກົດຫມາຍນີ້
- ມັນເປັນການຣະເມີດກົດຫມາຍທີ່ບຸກຄົນຄົນນຶ່ງ ຈະຕ້ອງສູບຢາ ໃນເຂດຫ້າມສູບຢາຕາມກົດຫມາຍ
- ກະທຳຄວາມຜິດ ຄັ້ງທີ 1 ພາຍໃນນຶ່ງປີ ຈະຖືກປັບໄຫມ -200 ດອນລາ
- ກະທຳຄວາມຜິດ ຄັ້ງທີ 2 ພາຍໃນນຶ່ງປີ ຈະຖືກປັບໄຫມ -300 ດອນລາ
- ກະທຳຄວາມຜິດ ຄັ້ງທ 3 ພາຍໃນນຶ່ງປີ ຈະຖືກປັບໄຫມ -500 ດອນລາ

ແຕ່ລະມື້ທີ່ມີການລະເມີດແບບຕໍ່ເນື່ອງ ເຫັນເປັນກໍຣະນີຄວາມຜິດທີ່ແຍກອອກຕ່າງຫາກ

ການບັງຄັບໃຊ້

- ກົດຫມາຍນີ້ຈະຖືກບັງຄັບໃຊ້ໂດຍອຳນາດການປົກຄອງທ້ອງຖິ່ນ

ຖ້າທ່ານຕ້ອງການຢາກໄດ້ສຳເນົາກົດຫມາຍນີ້ ກະຣຸນາເຂົ້າໄປແວບໄຊຕ: *www.SmokeFreeColorado.org*